Alert.seattle.gov/volcano(ພູເຂົາໄຟ)

**ຄວາມຈິງ:** ມີພູເຂົາໄຟລະເບີດ ໃນຣັດວໍຊິງຕັນ. ພັຍຈາກພູເຂົາໄຟລະເບີດແມ່ນຮວມທັງ ຂີ້ເຖົ່າຮ້ອນ, ຫີນ, ລາວາ, ຂີ້ຕົມໄຫຼ ແລະດິນເຈື່ອນ. ການລະເບີດຮ້າຍແຮງຈະເປັນເຫດໃຫ້ຫົນທາງຂັດສົນ, ຂາດໄຟຟ້າ, ຂາດນໍ້າ, ຂາດແກັສ ແລະ ກ້ອນເຝື້ອທີ່ເຕັມໄປດ້ວຍຝຸ່ງຂີ້ເຖົ່າຈາກພູເຂົາໄຟຈະຖືກພັດໄປຕາມທວນລົມໄປສູ່ຜູ້ຄົນທີ່ຢູ່ຫ່າງອອກໄປເປັນຫຼາຍໆຮ້ອຍໄມລ໌ ແລະມັນຈະເປັນເຫດໃຫ້ເກີດພັຍອັນຕະລາຍຕໍ່ສຸຂະພາບຂອງເຂົາເຈົ້າ.

**ສິ່ງທີ່ຕ້ອງເຮັດ:**

- ທ່ານອາດຖືກບອກໃຫ້ຫຼົບພັຍຢູ່ກັບບ່ອນ ຫຼື ຍົກຍ້າຍຈາກບໍລິເວນ. ບໍ່ວ່າໃນກໍລະນີໃດກໍຕາມ ເຮົາຄວນຕຽມພ້ອມສເມີ.
- ເມື່ອມີປະກາດໃຫ້ຫຼົບພັຍຢູ່ກັບບ່ອນ ຄວນຕຽມພ້ອມທີ່ຈະຢູ່ຂ້າງໃນ. ເອົາຄອບຄົວແລະສັດລ້ຽງເຂົ້າມາທາງໃນ. ປິດປະຕູ, ປ່ອງຢ້ຽມ ແລະ ຝາອັດປ່ອງຄ້ວນໄຟ. ເອົາຜ້າຊຸ່ມອຸດຮູທາງເຂົ້າປະຕູແລະຮູຕ່າງໆທີ່ມີລົມຂ້າງນອກລ່ອງເຂົ້າມາ.
- ປິດພັດລົມ, ອາຍເຢັນ, ອາຍອຸ່ນຫຼືລະບົບອື່ນໆທີ່ດູດອາກາດຈາກຂ້າງນອກ.
- ຕຽມຫາແນວສຳຮອງແລະໃຊ້ສິ່ງທີ່ມີຢູ່ມາອຸດຮູຕ່າງໆ ເພື່ອສ້າງສິ່ງກີດກັນລົມທາງນອກບໍ່ໃຫ້ມາເຖິງທ່ານ.
- ປ້ອງກັນປອດຂອງທ່ານໂດຍການໃສ່ໜ້າກາກ(ທີ່ໃຊ້ແລ້ວຖິ້ມ). ຖ້າທ່ານມີບັນຫາທາງການຫັນໃຈ ໃຫ້ທ່ານເຮັດຕາມແຜນຈັດການກ່ຽວກັບໂຣກຫືດ.
- ປ້ອງກັນຕາຂອງທ່ານ-ເອົາຄອນແທັກເລນອອກ ແລ້ວໃສ່ແວ່ນຕາຫຼື protective goggles(ແວ່ນປ້ອງກັນຕາ)ແທນ.
- ເມື່ອມີປະກາດໃຫ້ຍົກຍ້າຍ-ທ່ານຕ້ອງຍົກຍ້າຍດ່ວນ. ໃຫ້ໄປຕາມເສັ້ນທາງທີ່ໄດ້ຈັດໄວ້ຕາມການແຈ້ງບອກໃນການຍົກຍ້າຍ. ເສັ້ນທາງຍົກຍ້າຍບາງສາຍຈະມີປ້າຍຕິດໄວ້ຕາມຫົນທາງແລະທາງຫຼວງ(ຮາຍເວ)ຕ່າງໆ.
- ຕິດຕາມຟັງຂ່າວຄວາມຄືບໜ້າກ່ຽວກັບຂໍ້ມູນສຸກເສີນທາງວິທຍຸ.
- **ຖ້າວ່າທ່ານຮູ້ຈັກຜູ້ໃດທີ່ບໍ່ເຂົ້າໃຈ ບໍ່ໄດ້ເບິ່ງ ຫຼືບໍ່ໄດ້ຍິນຂ່າວສານນີ້ ໃຫ້ທ່ານບອກເຂົາເຈົ້າຕໍ່.**

**ລິ້ງທີ່ເປັນປໂຍດ:**

http://www.seattle.gov/emergency-management/what-if/hazards/volcano-hazards-including-lahars

http://mil.wa.gov/emergency-management-division/hazards/volcano

http://www.ready.gov/volcanoes